# ເມືອງເໜືອ

ໂອ ! ເມືອງເໜືອແສນງາມ
ເມືອເລາະຕາມ ແຄມນ້ຳຂອງ
ເຫັນນ້ຳໃສ ໄຫຼເປັນຟອງ
ເມືອໄດ້ມອງ ພາຊື່ນໃຈ

ໂອ ! ເມືອງເໜືອບໍ່ໜາ
ເຈົ້າຊ່າງພາ ໃຫ້ຫຼົງໄຫຼ
ຊົມຄວາມງາມ ຊາບຊຶ້ງໃຈ
ເຖິງຈາກໄປ ຢາກຫວນມາ

* ຊ່າງ ມີມົນຂັງ
ສົມດັ່ງ ຄຳລືຊາ
ຄົງເປັນ ວາສນາ
ຈຶ່ງໄດ້ມາ ແດນສວັນ

ໂອ ! ເມືອງເໜືອຍາມແລງ
ເມືອໄດ້ແຍງ ແລ້ວສຸກສັນ
ຫຼຽວເບິ່ງໄປ ຊວນໃຫ້ຝັນ
ຕອນຕາວັນ ຈະສິ້ນແສງ

# ດິນແດນທີ່ຮັກ

ຈາກຖິນດິນແດນ ແຄ້ວນເຄີຍອາສັຍຢູ
ເມືອມາຄິດດູ ແລ້ວພາອາໄລຫາ
ຈາກໄປແສນໄກ ບໍໄດ້ກ່າວອຳລາ
ຫຼາຍປີຜ່ານມາ ຍັງຄິດເຖິງຢູບໍຫາຍ

ຈາກແດນສວັນ ເຄີຍໄດ້ຝັນຄັງກ່ອນ
ຄິດເຖິງເມືອຕອນ ແສງຈັນນັນສິດໃສ
ສິງແສງແອວອາມ ແສນງາມຊ່າງຈັບໃຈ
ຄິດເຖິງເມືອໄດ ເສັຍດາຍທີຈຳຈາກໄກ

* ເມືອງສວັນ ຊັນໃດກໍຕາມ
ເຖິງຈະສວຍງາມ ຍັງທຽບທຽມບໍໄດ້
ເຈົາຄືທຸກສິງ ຄືທີພັກອິງຫົວໃຈ
ແມ່ນຈະຈາກໄປ ແສນໄກກໍຍັງຫ່ວງຫາ

ຄິດເຖິງຄັງໃດ ຫົວໃຈນັນໝອງໝົນ
ຄິດວ່າບໍດົນ ຈະໄດ້ກັບຄືນຫາ
ວັນນັນຂ້າຄົງ ຊືນຊົມສົມອຸຣາ
ເປັນອາສນາ ທີເກີດມາດິນແດນແຫ່ງນີ

# ຄອຍ

ລົມໜາວ ພັດມາຄັ້ງໃດ
ຫົວໃຈ ນ້ອງຍັງຄອຍຢູ່
ລືມແລ້ວ ຫຼືຍັງຢາກຮູ້
ຄິດດູ ແລ້ວພາເສົ້າໃຈ

ຄິດເຖິງ ຕລອດເວລາ
ຈາກລາ ໝີໜ້າຫ່າງໄກ
ຄ່ອຍຖ້າ ຈະພົບກັນໃໝ່
ຣີບໄວ ຟ້າວຫວນກັບມາ

* ຫາກດວງໃຈ ຂອງອ້າຍຍັງຫວັງ
ສ່ວນນ້ອງຍັງ ຄອຍປາຖນາ
ຣີບກັບຄືນ ຫາຍັງບໍ່ຊ້າ
ຮັກມີຄ່າ ເໜືອກ່ວາສິ່ງໃດ

ຫາກແມ່ນ ຝັນນັ້ນເປັນຈິງ
ທຸກສິ່ງ ເປັນໄປດັ່ງໝາຍ
ຈະຂໍ ຮັກບໍ່ລືມໄລ
ຍອດຊາຍ ຢ່າໄດ້ປ່ຽນໃຈ

# ຟ້າອຕັດສິນໃຈ

ເຄີຍມີຄູ່ຄອງ ກໍຕ້ອງເຫັນຫ່າງ
ຢູ່ຄົນລະທາງ ເໝີນໝາງກັນໄປ
ຍ້ອນຄວາມຄິດນັ້ນ ຕ່າງກັນຫຼືໃດ
ຈຶ່ງບໍ່ເຂົ້າໃຈ ຊຶ່ງກັນແລະກັນ

ແອບໄປມີຊູ້ ຄູ່ຄອງມາກມາຍ
ອ້າຍກາຍເປັນຊາຍ ຫຼົງໄຫຼເຫຫັນ
ຖ້າຫາກວັນໃດ ອ້າຍລືມອະດີດນັ້ນ
ນ້ອງກໍຈະຫັນ ມາຮັກດ້ອຍໃຈແທ້ຈິງ

* ຟ້າອຕັດສິນໃຈ ຢ່າໃຫ້ນ້ອງຄອຍ
ຢ່າປ່ອຍໃຫ້ຄອຍ ຫາກອ້າຍຮັກຈິງ
ຫາກອ້າຍຂືນຊ້ຳ ນ້ອງອາດຫາໃໝ່ແອບອີງ
ຢ່າໄດ້ເສັຍມິ້ງ ຫາກຫົວໃຈຍັງປາຖນາ

ເຖິງຈະຫຼົງໄຫຼ ຫ້າມໃຈໄວ້ກ່ອນ
ຢ້ານຮັກຈາກຈອນ ຊ້ຳໃຈໄຮ້ຄ່າ
ຈົ່ງຄິດໃຫ້ດີ ເສັຍກ່ອນເກີດໜາ
ເວລາຄອຍຖ້າ ອາດທຳໃຫ້ນ້ອງປ່ຽນໃຈ

# ລືມເລີງ

ປາກພົບພໍ່ ປອກລໍ່ກັບໄປ
ທຳໃຫ້ຫາຍ ຄວາມເສົາໝອງ
ຄິດມີຄູ່ ປູ່ຍ່າງຄອງ
ມີເງິນທອງ ແສນຈະສບາຍ

ຊີວິດໜຸ່ມ ມັນກຸ້ມຫົວໃຈ
ປາເກັບໄວ້ ໃຫ້ອຸ້ນວາຍ
ຄິດໃຫ້ດີ ຍັງບໍ່ສາຍ
ປາເສັຍດາຍ ປອຍໄວ້ມາເຕັ້ນລຳ

* ລືມເລີງສຳລານ ພາກັນມາເຕັ້ນລຳ
ສິ່ງທີ່ຊ້ຳ ປາຈົດຈຳ
ມ່ວນກັນໄປ ແສນສຸກລ້ຳ
ມາຮ້ອງລຳ ກັນຕໍ່ໄປ

ຂໍໃຫ້ເພື່ອນ ເຕືອນກັນເອົາໄວ້
ປາຫຼົງໄຫຼ ຈົນງົມງາຍ
ມາຮ້ອງລຳ ກັນຕລອດໄປ
ແລ້ວຫົວໃຈ ຈະເບີກບານ

# ຄຸນຄ່າຂອງຄົນ

ຄົນເຮົາເກີດມາ ໂຊກດີເຫຼືອລົນ
ຈະມີຫຼືຈົນ ກໍຄົນເໝືອນກັນ
ຈົງສ້າງຄວາມດີ ເປັນສິງສຳຄັນ
ຊື່ສັດຕໍ່ກັນ ສິງນັ້ນມີຄຸນຄ່າ

ຄົນເຮົາເກີດມາ ຕ້ອງມີສິນທັມ
ຢ່າໄປສ້າງກັມ ທຳຊົວເຖິດໜາ
ມີໃຈເພື່ອແຜ ເອື້ອເຟື້ອກະຣຸນາ
ມີຄວາມເມດຕາ ປານີຕໍ່ກັນ

* ສ້າງບຸນກຸສົນ ທຳຕົນໃຫ້ເປັນຄົນດີ
ຢ່າຄິດບັງບຽດສຽດສີ ຣາວີມະນຸດດ້ວຍກັນ
ຄວາມໂລບໂລພາ ສິງນັ້ນຢ່າໄດ້ໄຝ່ຝັນ

ສ້າງຄວາມສຳພັນ ຮັກກັນເອົາໄວ້ຕລອດໄປ

ມີສິນທາງໃຈ ເຫຼື້ອມໃສຕໍ່ກັນ
ນັບຖືສວັນ ຈົງຈຳເອົາໄວ້
ຄົນເຮົາຈະຢູ່ ເຊີດຊູກັນໄດ້
ກໍປອບຫົວໃຈ ຊື່ຕຣົງຜູກພັນ

# ຄິດ

ຢາກມີເອດມົນ ດົນບັນດານ
ໃຫ້ສອັນ ຊ່ອຍເສກສັນ
ກັບຄວາມຫວັງ ທີໄຟຝັນ
ຈິງດົນບັນດານ ພາໃຫ້ກັບກາຍ

ຢາກບອກໃຫ້ຮູ້ ຄວາມໃນໃຈ
ຈະມີໃຜ ຊ່ອຍແກ້ໄຂ
ໃຫ້ແນວຄິດ ຈິດຜ່ອງໃສ
ຂໍເປັນຄູ່ຊາຍ ຕລອດໄປ

* ຢາກຈະຝາກຮັກ ກັບໃຜຄົນນຶ່ງ
ຢາກໃຫ້ມັນຊຶ່ງ ຫຍິງກ່ວາສິ່ງໃດ
ເໝືອນກັບໝູ່ປາ ຄູ່ກັບນຳໃສ
ເໝືອນກັບຫົວໃຈ ຮັກເໜືອອື່ນໃດທັງປວງ

ຢາກຈະມີ ຄວາມຮັກແທ້
ບໍຜັນແປ ຄິດຫຼອກລວງ
ຈະບໍທຳ ໃຫ້ຊ່ຳຊອງ
ຂໍເປັນຄູ່ຄອງ ຈົນຊີບວາຍ

# ຮັກຫາຍໄປກັບສາຍລົມ

ດວງດອກໄມ້ ເລີ່ມເບີກບານ
ແສງຕາວັນ ສາດສ່ອງມາ
ຮຸ່ງເຮືອງໄປ ທົ່ວນະພາ
ຝູງນົກກາ ຮ້ອງກ້ອງດັງ

ເຈົ້າຈາກໄປ ໄກລັບຕາ
ເຝົ້າຄອຍຫາ ປູທາງຫຼັງ
ຈົນບໍ່ນອງ ສອງຟາກຝັ່ງ
ນ້ອງນັບຍັງ ຄອຍດ້ວຍໃຈ

* ໂອ...! ຮັກມາຫາຍ ໄປກັບສາຍລົມ

ພຽງແຕ່ໄດ້ຊົມ ກໍຈອນຈາກໄກ

ເຈົ້າຊ່າງມາທຳ ໃຫ້ຂ້າເສັຍໃຈ

ມາເຫັນຫ່າງໄປ ປ່ອຍໄວ້ດຽວດາຍ

ໄດ້ແຕ່ລໍ ຄອຍເລື່ອຍມາ
ວັນເວລາ ໝູນປ່ຽນໄປ
ຄິດແລ້ວພາ ຫ່ວງອາໄລ
ຮັກຈາກໄກ ໄປຫຼັບຕາ

# ຢ່າສິ້ນຫວັງ

ເໝືອນກັບຄົນໄຂ້ ຫົວໃຈເຕັມໄປດ້ວຍແຜ
ເປັນຄົນຜາຍແພ້ ຍ້ອນຖືກຮັກນັ້ນທຳລາຍ
ບາງໜ້າສິງສານ ຖືກຖອດຖິ້ມຢູ່ດຽວດາຍ
ຈຶ່ງຄິດເຫັນໃຈ ຫ່ວງໄຍຢູເລື້ອຍມາ

ໃບໜ້າເສົ້າຊຶມ ຮູບຂຶມບໍ່ເຄີຍແຈມໃສ
ນ້ອງຄົງເສັຍໃຈ ຮ້ອງໄຫ້ຢູ່ຕລອດເວລາ
ໃຜໜໍອາດຫານ ທຳໄດ້ໄຮ້ຄວາມເມດຕາ
ທຳລາຍດອກຟ້າ ຈົນນ້ຳຕາໄຫຼນອງ

* ຢ່າເສົ້າເຖີດນ້ອງ ຢ່າໄປຮ້ອງໄຫ້ເຖີດໜາ
ອ້າຍຍັງຄອຍຖ້າ ປາຖນານ້ອງນັ້ນມາຄອງ
ອ້າຍຂໍສາບານ ຈະຂໍຢູ່ຮຽງຄຽງສອງ
ຫົວໃຈອ້າຍມີແຕ່ນ້ອງ ບໍ່ຕ້ອງໂສກເສົ້າດວງໃຈ

ຍິ້ມເຖີດຄົນດີ ລືມເຣື້ອງຫຼັງທີ່ຜ່ານມາ
ນ້ອງຍັງມີຄ່າ ສຳລັບອ້າຍເໜືອສິ່ງໃດ
ອ້າຍຈະຖນອມ ຄວາມຮັກສອງເຮົາເອົາໄວ້
ເທີດທູນດວງໃຈ ເອົາໄວ້ຈົນຊົ່ວຊີວາ

# ຢ່າເອົາຄວາມຮັກມາທຽບກັນ

ນ້ອງເຄີຍມີຄູ່ຄອງ ມາແລ້ວກ່ອນເຮົາພົບກັນ
ແຕ່ຄວາມຮັກນ້ອງນັນ ກັບກາຍຜັນແປປຽນໄປ
ຍ້ອນຄວາມຜິດຫວັງ ນ້ອງຂາດຄວາມຮູ້ສຶກໃນໃຈ
ເບິງຄວາມຮັກນັນກາຍ ເປັນສິງທີບໍສຳຄັນ

ຍ້ອນກັມເວນຫຼືໃດ ຈິງໄດ້ຫຼົງໄຫຼຮັກນາງ
ໝາງໃຈກັບທຸກຄັງ ນ້ອງນັນບໍເຄີຍໄຫ່ວຫວັນ
ບໍມີຄຳເສັຍໃຈ ເສັຍດາຍສິງໃດທັງນັນ
ຄົນທີເສົາໂສກສົນ ກໍຄືອ້າຍຄົນທີ້ຮັກຈິງ

* ຢາເອົາຮັກຂອງອ້າຍ ໄປທຽບກັບຮັກຊາຍຄົນເກົາ
ເຂົາຫຼອກລວງເຈົາ ໂລມເລົາແລ້ວເຂົາປອຍຖິງ
ແຕ່ຄວາມຮັກອ້າຍ ມອບໃຫ້ດ້ວຍໃຈຮັກຈິງ
ຫວັງແບບແອບອີງ ຂໍຢູ່ເປັນຄູ່ຕລອດໄປ

ອ້າຍຢາກຈະຂໍຮ້ອງ ຫາກນ້ອງຢາກຄິດຮັກໃໝ່
ຂໍນ້ອງຮັກດ້ວຍໃຈ ຢາໄດ້ຄິດຈະທຳລາຍ
ຂໍຈິງຮັກໃຫ້ໝັນ ຮັກນັນຈິງມີຄວາມໝາຍ
ຫາກນ້ອງຮັກຈິງຈາກໃຈ ຄິງໄດ້ເໝືອນກັບຄວາມຫວັງ